ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ
ຫ້ອງການ

ເລກທີ 211/ທກ
ນະຄອນຫຼວງວຽງຈັນ, ວັນທີ 20 ສິງຫາ 2026

ໜັງສືແຈ້ງເຊີນປະມູນ

ເຖິງ: ບັນດາວິສາຫະກິດ ແລະ ບໍລິສັດ ທັງຫຼາຍ.

ເລື່ອງ: ເຂົ້າຮ່ວມການປະມູນສະໜອງການບໍລິການຟື້ນຟູຂໍ້ມູນ ໃຫ້ທະນາຄານແຫ່ງ ສປປ ລາວ.

- ອີງຕາມ ກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017;
- ອີງຕາມ ຂໍ້ຕົກລົງວ່າດ້ວຍລະບຽບການຈັດຊື້, ຈັດຈ້າງ ການໃຊ້ບໍລິການດ້ວຍທຶນຂອງ ທະນາຄານແຫ່ງ ສປປ ລາວ ສະບັບເລກທີ 919/ທຫລ, ລົງວັນທີ 23 ຕຸລາ 2013.

ຫ້ອງການ, ທະນາຄານແຫ່ງ ສປປ ລາວ (ທຫລ) ຂໍຖືເປັນກຽດແຈ້ງມາຍັງບັນດາບໍລິສັດ ຊາບວ່າ: ທຫລ ຈະມີການປະມູນສົມທຽບລາຄາ ເພື່ອສະໜອງການບໍລິການຟື້ນຟູຂໍ້ມູນ ໃຫ້ ທຫລ, ຊຶ່ງຜູ້ທີ່ສົນໃຈເຂົ້າຮ່ວມໃນການປະມູນ ຈະຕ້ອງມີມາດຕະຖານ-ເງື່ອນໄຂ ເບື້ອງຕົ້ນ ດັ່ງລຸ່ມນີ້:

I. **ໄລຍະທີ 1 ຂັ້ນຕອນຂາຍຊອງປະມູນ: ຜູ້ທີ່ຈະສາມາດຊື້ຊອງປະມູນໄດ້ຕ້ອງມີເງື່ອນໄຂຄົບຖ້ວນຄື:**

1. ມີໃບທະບຽນວິສາຫະກິດ ແລະ ໃບອະນຸຍາດດຳເນີນທຸລະກິດ ທີ່ຂະແໜງການກ່ຽວຂ້ອງ ອອກອະນຸຍາດ ແລະ ນຳໃຊ້ໄດ້ໃນປັດຈຸບັນ;
2. ມີໃບຢັ້ງຢືນການມອບພັນທະອາກອນ ປະຈຳປີ 2025;
3. ມີໃບຢັ້ງຢືນຖານະການເງິນ ຫຼື ຍອດເຫຼືອເງິນຝາກ ຈາກທະນາຄານທຸລະກິດໃດໜຶ່ງ ແລະ ໃນລາຍງານບັນຊີສຳຮອງຢ້ອນຫຼັງ 3 ເດືອນ (ເດືອນ 4-6 ປີ 2026);
4. ມີປະສົບການໃນການດຳເນີນທຸລະກິດກ່ຽວຂ້ອງ ຫຼື ອື່ນໆ ທີ່ຕິດພັນ ຢ່າງໜ້ອຍ 3 ປີ ຂຶ້ນໄປ, ມີຜົນງານໃນການເຮັດລະບົບດັ່ງກ່າວໃນໄລຍະຜ່ານມາ ເພື່ອນຳສະເໜີຕໍ່ຄະນະຮັບຜິດຊອບກ່ຽວຂ້ອງ (ມີເອກະສານຢັ້ງຢືນມາພ້ອມ);

ສຳລັບມາດຕະຖານ ແລະ ຄຸນສົມບັດໃນການຟື້ນຟູລະບົບກ່ຽວຂ້ອງໄດ້ລະບຸຢູ່ໃນເອກະສານຊ້ອນທ້າຍຄັດຕິດມາພ້ອມນີ້.

ໝາຍເຫດ: ບໍລິສັດທີ່ຈະເຂົ້າຮ່ວມຊື້ຊອງປະມູນຕ້ອງປະກອບ ແລະ ສຳເນົາເອກະສານຕາມ 4 ລາຍການ ຂ້າງເທິງຢ່າງຄົບຖ້ວນ ແລະ ມີການຢັ້ງຢືນຈາກຜູ້ອຳນວຍການບໍລິສັດກ່ຽວຂ້ອງມາພ້ອມ ທຫລ ຈຶ່ງຈະຂາຍຊອງປະມູນໃຫ້ໄດ້. ສຳລັບມູນຄ່າຊື້ຊອງປະມູນ ແມ່ນລາຄາ 2,000,000 ກີບ/ຊອງ, ຊຶ່ງມູນຄ່າດັ່ງກ່າວຈະບໍ່ຖືກສົ່ງຄືນ ບໍ່ວ່າກໍລະນີໃດໆ.

II. ໄລຍະທີ 2 ຂັ້ນຕອນການປະມູນ: ຜູ້ທີ່ໄດ້ຊື້ຊອງປະມູນແລ້ວ ຕ້ອງປະຕິບັດຕາມຂັ້ນຕອນການ ປະມູນຄື:

1. ຕ້ອງປະກອບເອກະສານປະມູນໃຫ້ຄົບຖ້ວນຕາມທີ່ລະບຸໄວ້ໃນເອກະສານກ່ຽວຂ້ອງ (TOR);

2. ສຳລັບມື້ເປີດຊອງປະມູນ ທຫລ ຈະແຈ້ງການຕາມພາຍຫຼັງ ແລະ ຜູ້ເຂົ້າຮ່ວມການປະມູນ ຕ້ອງຖືຊອງປະມູນ (ຊອງລາຄາ ແລະ ເອກະສານກ່ຽວຂ້ອງຕາມເງື່ອນໄຂທີ່ກຳນົດໄວ້ຂອງຕົນມາພ້ອມ) ໃນມື້ເປີດຊອງຕົວຈິງ ໂດຍຈະເປີດຊອງປະມູນລາຄາ ຂອງແຕ່ລະພາກສ່ວນພ້ອມກັນ ໂດຍຊ່ອງໜ້າກັບຄະນະກຳມະການກ່ຽວຂ້ອງ;

3. ຖ້າໄດ້ຮັບການຄັດເລືອກ ຈະໄດ້ເຊັນສັນຍາຮ່ວມວຽກກັນ;

ບັນດາວິສາຫະກິດ ແລະ ບໍລິສັດ ທີ່ມີຄວາມສົນໃຈເຂົ້າຮ່ວມການປະມູນ ສາມາດພົວພັນຊື້ຊອງປະມູນ ຢູ່ພະແນກບໍລິຫານ, ຫ້ອງການ ທຫລ, ຕັ້ງຢູ່ບ້ານຊຽງຢືນ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ, ໝາຍເລກໂທລະສັບ 021 241268, 020 22223647 ເລີ່ມແຕ່ວັນທີ 20 ສິງຫາ ຫາ 04 ກັນຍາ 2026.

ດັ່ງນັ້ນ, ຈຶ່ງແຈ້ງເຊີນມາຍັງບັນດາວິສາຫະກິດ ແລະ ບໍລິສັດ ເພື່ອຊາບ ແລະ ເຂົ້າຮ່ວມການປະມູນໃນຄັ້ງນີ້ດ້ວຍ.

ຫົວໜ້າຫ້ອງການ

ທະນາຄານແຫ່ງ ສປປ ລາວ
ຫ້ອງການ

ພານຸສັກ ແກ່ນວົງມະຈັນ